ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 3198 /ທຄຕລ 2022

ນະຄອນຫຼວງວຽງຈັນ, ວັນທີ: 30 NOV 2022

# ໜັງສືແຈ້ງເຊີນ

**ເຖິງ** : ບັນດາບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄາ ເຮືອນຄິວທັນສະໄໝ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໄອທີຊາບວ່າ ທຄຕລ ມີຄວາມຕ້ອງການ ເຮືອນຄິວທັນສະໄໝ ຈຳນວນ 07 ໜ່ວຍ , ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

| ລ.ດ | ລາຍລະອຽດ | ຈຳນວນ | ໝາຍເຫດ |
|---|---|---|---|
| 1. | **<u>ສະເປັກເຄື່ອງກົດບັດຄິວ KIOSK:</u>**<br>- PC: Core i3 Gen 11 ຂຶ້ນໄປ, Ram 8GB DDR4, SSD Nvme M.2 256GB ບັນຈຸພອດ USB 2.0 + 3.0 ຈຳນວນ 6 ພອດຂຶ້ນໄປ ພ້ອມທັງມີພອດ HDMI, Lan, Speaker ຕາມພື້ນຖານຄົບຊຸດ.<br>- Touch Screen LCD Display size 21.5".<br>- Printer Thermal 80mm.<br>- Sound Built in Speaker + Amplifier.<br>- QR Code and RFID Card Reader.<br>- Cabinet Color: Red and White + LED (Slim and Modern) ແລະ ວັດສະດຸທີ່ເຮັດດ້ວຍອາລູມິນຽມໜຽວພິເສດ.<br>- Output: Network, HDMI, Power Switch, PC Power button.<br> | 07 ໜ່ວຍ | ບໍລິສັດສາມາດເຂົ້າມາເບິ່ງສິນຄ້າຕົວຈິງໄດ້ຢູ່ສຳນັກງານໃຫຍ່ (ຂະແໜງບໍລິການລູກຄ້າ VIP ຊັ້ນ 2 ຕຶກ A) ໂດຍ ສົມທົບກັບ ພະນັກງານເຕັກນິກ ໄອທີ ຂອງ ທຄຕລ ໄດ້. |



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

- ເງື່ອນໄຂຂອງບໍລິສັດ ຫ້າງຮ້ານຕົວແທນຈຳໜ່າຍອຸປະກອນໄອທີ ມີຄວາມຕ້ອງການຍື່ນຊອງປະມູນລາຄາຕ້ອງປະກອບເອກະສານໃຫ້ຄົບຖ້ວນດັ່ງລຸ່ມນີ້:

- **ເອກະສານ ຊອງທີ1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງອຸປະກອນໄອທີ, ດຳເນີນທຸລະກິດຢ່າງໜ້ອຍ 03 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2021 ແລະ ໃບຢັ້ງຢືນການເປັນຕົວແທນຈຳໜ່າຍ (ຖ້າມີ).
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.
3. ເອກະສານຂ້າງເທິງແມ່ນສາມາດຍື່ນໄດ້ນັບຈາກວັນນີ້ຈົນເຖິງ ວັນພະຫັດ **ວັນທີ 15/12/2022 ເວລາ 11:00 ໂມງ** ໂດຍການສົ່ງຟາຍເຂົ້າ E-mail: procurement@bcel.com.la

- **ເອກະສານ ຊອງທີ2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ, ພ້ອມທັງລະບຸມື້ໝົດກຳນົດໃນໃບສະເໜີລາຄາດັ່ງກ່າວຢ່າງໜ້ອຍ 30 ວັນ.
2. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 21/01/2023)** ຫຼື ແຊັກທີ່ວີຊ່າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.
3. ໃນວັນພຸດ **ວັນທີ 21/12/2022 ເວລາ 09:00 ໂມງ** ແມ່ນມື້ເປີດຊອງປະມູນ ສະນັ້ນໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ອາຄານ C.

- **ໝາຍເຫດ:**

- ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.

- **ການຊຳລະຈະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

- **ງວດທີ 1:** ຊຳລະ 90% ຂອງມູນຄ່າ ພາຍໃນ 25 ວັນລັດຖະການ ພາຍຫຼັງໄດ້ຮັບເຄື່ອງ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຕິດຕາມກວດກາ.
- **ງວດທີ 2:** ຊຳລະ 10% ຂອງມູນຄ່າ ພາຍຫຼັງຄົບກຳນົດການຄ້ຳປະກັນຄຸນະພາບສິນຄ້າ 06 ເດືອນ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຮກ **ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ບັນທະລາດ ແກ້ວປະເສີດ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .....................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ........................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: